ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 2672 /ກງ

ນະຄອນຫຼວງວຽງຈັນ, ວັນທີ 22 ສິງຫາ 2025

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມແຜນການ

- ອີງຕາມ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 538/ນຍ, ລົງວັນທີ 21 ສິງຫາ 2025;
- ການຄົ້ນຄວ້າຂອງຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງຂອງຂະແໜງການເງິນ ແລະ ບົດລາຍງານຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1370/ກຈພ, ລົງວັນທີ 15 ກໍລະກົດ 2025.

## ລັດຖະມົນຕີ ກະຊວງການເງິນ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອໃຫ້ເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມແຜນການ ແນໃສ່ຈັດຕັ້ງຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການລົງທຶນຂອງລັດ ໃນແຕ່ລະໄລຍະ ໃຫ້ມີຄວາມກະທັດຮັດ, ໂລ່ງລ່ຽນ, ມີປະສິດທິພາບ, ເຂັ້ມແຂງ, ໂປ່ງໃສ, ໜັກແໜ້ນ ແລະ ທັນສະໄໝ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມແຜນການ ຂຽນເປັນຕົວອັກສອນຫຍໍ້ວ່າ " **ກຜ** " ແລະ ຂຽນເປັນພາສາອັງກິດວ່າ **Department of Planning** ຂຽນເປັນຕົວອັກສອນຫຍໍ້ວ່າ: " **DOP** " ແມ່ນກົງຈັກໜຶ່ງຂອງ ກະຊວງການເງິນ, ມີພາລະບົດບາດເປັນເສນາທິການໃຫ້ແກ່ ຄະນະນຳກະຊວງການເງິນ ໃນການສ້າງ, ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການລົງທຶນຂອງລັດ ໃນແຕ່ລະໄລຍະ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຊຸກຍູ້, ຕິດຕາມ, ຄຸ້ມຄອງ ແລະ ສະຫຼຸບລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການລົງທຶນຂອງລັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມແຜນການ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ສ້າງດຳລັດ, ຄຳສັ່ງ, ແຈ້ງການ, ລະບຽບການ ແລະ ບົດແນະນຳຕ່າງໆກ່ຽວກັບການສ້າງ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການລົງທຶນຂອງລັດ, ເສດຖະກິດມະຫາພາກ, ການພັດທະນາເຂດແຄວ້ນ ແລະ ລຶບລ້າງຄວາມທຸກຍາກ, ວຽກງານປະຊາກອນ ແລະ ການພັດທະນາ, ການເຊື່ອມສານຍຸດທະສາດ ແລະ ເປົ້າໝາຍການພັດທະນາແບບຍືນຍົງ ແລະ ການເຕີບໂຕສີຂຽວ ທີ່ລັດຖະບານ ໄດ້ຮັບຮອງໃນແຕ່ລະໄລຍະ ເພື່ອນຳສະເໜີຄະນະນຳກະຊວງ ສະເໜີລັດຖະບານ ພິຈາລະນາປະກາດໃຊ້;
2. ປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ເພື່ອຄົ້ນຄວ້າສັງລວມ, ວິເຄາະ-ວິໄຈ, ສ້າງ, ຕິດຕາມ, ຊຸກຍູ້ ແລະ ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ ແລະ 5 ປີ, ແຜນການລົງທຶນຂອງລັດ ປະຈຳປີ ແລະ ໄລຍະກາງ (1+2);
3. ປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ເພື່ອຄົ້ນຄວ້າສັງລວມ, ວິເຄາະ-ວິໄຈ, ສ້າງ, ຕິດຕາມ, ຊຸກຍູ້, ແລະ ສະຫຼຸບຕີລາຄາການຄຸ້ມຄອງ ແລະ ດຸ່ນດ່ຽງເສດຖະກິດມະຫາພາກ, ການພັດທະນາເຂດແຄວ້ນ ແລະ ລຶບລ້າງຄວາມທຸກຍາກ ແລະ ວຽກງານປະຊາກອນ ແລະ ການພັດທະນາ, ການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ ແລະ ການເຕີບໂຕສີຂຽວ ເພື່ອລາຍງານ ຄະນະນຳກະຊວງພິຈາລະນາ;
4. ສ້າງວິທີ ວິທະຍາກ່ຽວກັບການສ້າງ ແລະ ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການລົງທຶນຂອງລັດ, ການພັດທະນາເຂດແຄວ້ນ ແລະ ລຶບລ້າງຄວາມທຸກຍາກ, ວຽກງານປະຊາກອນ ແລະ ການພັດທະນາ ແລະ ວຽກງານອື່ນໆ ຕາມຂອບເຂດສິດ ແລະ ພາລະບົດບາດຂອງກົມແຜນການ ພ້ອມທັງຈັດຝຶກອົບຮົມ, ເຜີຍແຜ່ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ສາກົນ ໃນການຄົ້ນຄວ້າ, ຄາດຄະເນ, ສ້າງ, ດຸ່ນດ່ຽງ, ຄຸ້ມຄອງ, ຕິດຕາມ, ຕີລາຄາສະຖຽນລະພາບເສດຖະກິດມະຫາພາກ ແລະ ຄົ້ນຄວ້າມາດຕະການແກ້ໄຂເພື່ອຮັບໃຊ້ໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;
6. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າສ້າງ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຍຸດທະສາດການເງິນ ແລະ ຍຸດທະສາດອື່ນໆ ຕາມຂອບເຂດສິດຂອງກົມແຜນການ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການລົງທຶນຂອງລັດ ໃນແຕ່ລະໄລຍະ;
7. ເຜີຍແຜ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກັບພາກສ່ວນກ່ຽວຂ້ອງ ເພື່ອລະດົມ ແລະ ຍາດແຍ່ງ ການຊ່ວຍເຫຼືອທາງການເພື່ອການພັດທະນາ, ພາກເອກະຊົນ ແລະ ທຸກພາກສ່ວນຂອງສັງຄົມ ເພື່ອສະໜັບສະໜູນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີໝາກຜົນສູງ;
8. ເປັນເຈົ້າການຄົ້ນຄວ້າສັງລວມການສະເໜີໂຄງການລົງທຶນຂອງລັດ (ງົບປະມານລັດ ແລະ ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ) ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ສ້າງຮ່າງແຜນການລົງທຶນຂອງລັດ ປະຈຳປີ ແລະ ໄລຍະກາງ (1+2) ຕາມນິຕິກຳ ໄດ້ກຳນົດ;
9. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງລົງເລິກວິໄຈ ຈຸດປະສົງ, ເປົ້າໝາຍ, ໂຄງປະກອບ, ຄວາມອາດສາມາດ ແລະ ປະສິດທິຜົນການລົງທຶນຂອງລັດ;

10. ເປັນເຈົ້າການຄົ້ນຄວ້າ, ດັດສົມ ແລະ ຈັດສັນງົບປະມານການລົງທຶນຂອງລັດ ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເພື່ອນຳສະເໜີຄະນະນຳກະຊວງ ສະເໜີລັດຖະບານພິຈາລະນາໃນແຕ່ລະໄລຍະ;
11. ຄຸ້ມຄອງ ແລະ ຄົ້ນຄວ້ານະໂຍບາຍ ແກ້ໄຂໜີ້ສິນການລົງທຶນຂອງລັດ ເພື່ອສະເໜີລັດຖະມົນຕີກະຊວງການເງິນພິຈາລະນາໃນແຕ່ລະໄລຍະ;
12. ຄົ້ນຄວ້ານະໂຍບາຍ, ກົນໄກ ແລະ ວິທີການ ໃນການຈັດສັນງົບປະມານ ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການ ຟື້ນຟູໂຄງລ່າງພື້ນຖານ ທີ່ໄດ້ຮັບຜົນກະທົບຈາກໄພພິບັດ ເພື່ອສະເໜີທ່ານລັດຖະມົນຕີກະຊວງການເງິນ ພິຈາລະນາໃນແຕ່ລະໄລຍະ;
13. ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການລົງທຶນຂອງລັດ, ເສດຖະກິດມະຫາພາກ, ການພັດທະນາເຂດແຄ້ວນ ແລະ ລຶບລ້າງຄວາມທຸກຍາກ ແລະ ວຽກງານປະຊາກອນ ແລະ ການພັດທະນາ ເພື່ອຕີລາຄາສະພາບການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ;
14. ເຂົ້າຮ່ວມເປັນຄະນະຮັບຜິດຊອບໂຄງການລົງທຶນຂອງລັດ ໃນການປະມູນ, ກວດກາການຈັດຕັ້ງປະຕິບັດໂຄງການໃນແຕ່ລະໄລຍະ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ໃຫ້ສອດຄ່ອງຕາມກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ;
15. ຄົ້ນຄວ້າມີຄຳເຫັນຕໍ່ຮ່າງສັນຍາ ແລະ ຄົ້ນຄວ້າການສະເໜີຂໍຕໍ່ສັນຍາການໂຄງການລົງທຶນຂອງລັດ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ; ກວດຜ່ານຢັ້ງຢືນເອກະສານສະເໜີຂໍຊຳລະໂຄງການລົງທຶນຂອງລັດຂອງບັນດາຂະແໜງການຂັ້ນສູນກາງ;
16. ຄົ້ນຄວ້າການສະເໜີດັດແກ້ມູນຄ່າໂຄງການ, ອວ່າຍທຶນ, ໂຈະ ແລະ ຍົກເລີກໂຄງການລົງທຶນຂອງລັດຕາມການສະເໜີຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ເພື່ອສະເໜີຂັ້ນເທິງພິຈາລະນາອະນຸມັດ;
17. ເກັບກຳ, ສັງລວມ ແລະ ສ້າງຖານຂໍ້ມູນຂ່າວສານ ລວມທັງຂໍ້ມູນສະຖິຕິການພັດທະນາເສດຖະກິດ-ສັງຄົມ ແລະ ການລົງທຶນຂອງລັດ, ສະພາບເສດຖະກິດມະຫາພາກ, ການພັດທະນາເຂດແຄ້ວນ ແລະ ລຶບລ້າງຄວາມທຸກຍາກ, ວຽກງານປະຊາກອນ ແລະ ການພັດທະນາ ພ້ອມທັງເຜີຍແຜ່ຂໍ້ມູນຂ່າວສານດັ່ງກ່າວ;
18. ເຂົ້າຮ່ວມກອງປະຊຸມ ແລະ ເຂົ້າຮ່ວມເປັນຄະນະຕ່າງໆຕາມການເຊື້ອເຊີນ ທີ່ພົວພັນກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການລົງທຶນຂອງລັດ, ເສດຖະກິດມະຫາພາກ, ການພັດທະນາເຂດແຄ້ວນ ແລະ ລຶບລ້າງຄວາມທຸກຍາກ, ວຽກງານປະຊາກອນ, ວຽກງານກວດສອບ, ວຽກງານກວດກາ ແລະ ຄະນະສະເພາະກິດຕ່າງໆຕາມການມອບໝາຍຂອງຂັ້ນເທິງ;
19. ເຮັດໜ້າທີ່ປົກປ້ອງພັກ ແລະ ພະນັກງານພາຍໃນກົມບໍ່ໃຫ້ເຄື່ອນໄຫວຜິດກົດລະບຽບຂອງພັກ, ກົດໝາຍຂອງລັດ, ກົດລະບຽບຂອງກົມກອງ ແລະ ກະຊວງການເງິນ ວາງອອກ;
20. ຈັດຕັ້ງນຳພາ ແລະ ຄຸ້ມຄອງກໍ່ສ້າງພະນັກງານພາຍໃນກົມຂອງຕົນ ໃຫ້ໜັກແໜ້ນທາງດ້ານແນວຄິດການເມືອງເຂັ້ມແຂງທາງດ້ານການຈັດຕັ້ງ, ຊຳນານງານທາງດ້ານວິຊາສະເພາະ ແລະ ມີປະສົບການໃນການປະຕິບັດວຽກງານຕົວຈິງໃຫ້ກາຍເປັນຊ່ຽວຊານດ້ານການວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການຄຸ້ມຄອງການລົງທຶນຂອງລັດ;
21. ຄຸ້ມຄອງ, ນຳໃຊ້ພາຫະນະ ແລະ ວັດຖຸອຸປະກອນ ແລະ ຂຶ້ນແຜນງົບປະມານ ເພື່ອຮັບໃຊ້ວຽກບໍລິຫານ ແລະ ການເຄື່ອນໄຫວວຽກວິຊາສະເພາະພາຍໃນກົມແຜນການ;

22. ຄຸ້ມຄອງ, ນໍາໃຊ້ ແລະ ລາຍງານທຶນຊ່ວຍເຫຼືອທາງການເພື່ອການພັດທະນາໃນການປະຕິບັດໂຄງການຕ່າງໆທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນໃຫ້ສອດຄ່ອງກັບເປົ້າໝາຍ ແລະ ຖືກຕ້ອງກັບລະບຽບການຂອງກະຊວງ ແລະ ລະບຽບການຂອງຜູ້ໃຫ້ທຶນວາງອອກ;
23. ຄຸ້ມຄອງ, ນໍາໃຊ້, ປັບປຸງຂໍ້ມູນ ແລະ ພັດທະນາ ລະບົບຄຸ້ມຄອງຖານຂໍ້ມູນພະນັກງານ-ລັດຖະກອນທີ່ຢູ່ໃນການຄຸ້ມຄອງຂອງກົມ ໃນແຕ່ໄລຍະ ຕາມການແບ່ງຂັ້ນຄຸ້ມຄອງ;
24. ສະຫຼຸບສັງລວມລາຍງານ ການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງກົມ ເປັນປະຈໍາ ເດືອນ, 3 ເດືອນ, 6 ເດືອນ ແລະ ປະຈໍາປີ;
25. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະນໍາກະຊວງການເງິນ.

**ມາດຕາ 4 ຂອບເຂດສິດ**

ກົມແຜນການ ມີຂອບເຂດສິດດັ່ງນີ້:

1. ຄົ້ນຄວ້ານໍາສະເໜີອອກບົດແນະນໍາ, ແຈ້ງການຂອງກະຊວງການເງິນ ເຖິງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ແຂວງ, ຫົວໜ່ວຍທຸລະກິດຂອງລັດ ແລະ ເອກະຊົນ ຕາມຂອບເຂດສິດ ແລະ ພາລະບົດບາດຂອງຕົນ;
2. ເຊີນພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອປຶກສາຫາລືບັນດາວຽກງານທີ່ຕິດພັນກັບ ພາລະບົດບາດ ແລະ ໜ້າທີ່ຂອງຕົນ, ພ້ອມດຽວກັນນັ້ນ ກໍ່ເຂົ້າຮ່ວມເປັນຄະນະ ແລະ ຮ່ວມປະຊຸມກັບບັນດາ ພາກສ່ວນຕ່າງໆ ຕາມການເຊື້ອເຊີນ;
3. ຄົ້ນຄວ້າປັບປຸງບັນດານິຕິກໍາ ທີ່ເຫັນວ່າຍັງບໍ່ທັນສອດຄ່ອງ, ກົມກຽວ; ຄົ້ນຄວ້າ ແລະ ນໍາສະເໜີແນວຄວາມຄິດໃໝ່ໆ ກ່ຽວກັບວຽກງານວາງແຜນ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການລົງທຶນຂອງລັດ, ການຄຸ້ມຄອງ ແລະ ດຸ່ນດ່ຽງເສດຖະກິດມະຫາພາກ, ການພັດທະນາເຂດແຄວ້ນ ແລະ ລຶບລ້າງຄວາມທຸກຍາກ, ວຽກງານປະຊາກອນ ແລະ ການພັດທະນາ ໃຫ້ສອດຄ່ອງໃນແຕ່ລະໄລຍະ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ;
4. ປະສານເອົາບົດສະຫຼຸບ ແລະ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການລົງທຶນຂອງລັດ ໃນແຕ່ລະໄລຍະ ແລະ ບັນດາຂໍ້ມູນຕ່າງໆ ທີ່ຈໍາເປັນຈາກບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເພື່ອນໍາໃຊ້ເຂົ້າໃນການສ້າງ, ຄຸ້ມຄອງ, ດັດສົມເສດຖະກິດມະຫາພາກ ແລະ ສະຫຼຸບຕີລາຄາສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງ ຄົມແຫ່ງຊາດ ແລະ ແຜນການລົງທຶນຂອງລັດ;
5. ແນະນໍາ, ກວດກາ ແລະ ຈັດລຽງບູລິມະສິດ ການສະເໜີໂຄງການລົງທຶນຂອງລັດຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເຂົ້າແຜນປະຈໍາປີ ແລະ ໄລຍະກາງ (1+2) ເພື່ອສະເໜີຕໍ່ຂັ້ນເທິງພິຈາລະນາ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄ້ວາການສະເໜີຂໍທຶນເພີ່ມ, ການດັດແກ້ມູນຄ່າໂຄງການ, ອວ່າຍທຶນ, ໂຈະ ແລະ ຍົກເລີກໂຄງການລົງທຶນຂອງລັດ ຕາມການສະເໜີຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ;
7. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ແຂວງ ເພື່ອຄົ້ນຄວ້າ, ແກ້ໄຂໂຄງການທີ່ເຫັນວ່າການຈັດຕັ້ງປະຕິບັດບໍ່ສອດຄ່ອງກັບກົດໝາຍ, ບໍ່ມີປະສິດທິພາບ, ປະສິດທິຜົນ ຫຼື ມີຜົນກະທົບຕໍ່ສະພາບແວດລ້ອມທໍາມະຊາດ-ສັງຄົມ ເພື່ອລາຍງານຂັ້ນເທິງພິຈາລະນາ;

8. ຄົ້ນຄວ້ານະໂຍບາຍ, ກົນໄກການຈັດສັນງົບປະມານການລົງທຶນຂອງລັດ ປະຈໍາປີ ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ພ້ອມທັງຕິດຕາມກວດກາ ສະພາບການຈັດຕັ້ງປະຕິບັດ ເພື່ອສະຫຼຸບລາຍງານຂັ້ນເທິງ;
9. ປະສານສົມທົບກັບກົມຈັດຕັ້ງ ແລະ ພະນັກງານ ເພື່ອສະເໜີລັດຖະມົນຕີ ກະຊວງການເງິນ ພິຈາລະນາ ຕົກລົງ ສ້າງຕັ້ງ, ປັບປຸງ ແລະ ລົບລ້າງ ບັນດາພະແນກ ແລະ ຄະນະຮັບຜິດຊອບໂຄງການ ຫຼື ຄະນະ ສະເພາະກິດທີ່ຂຶ້ນ ກັບຄວາມຮັບຜິດຊອບຂອງຕົນ;
10. ປະສານສົມທົບກັບກົມຈັດຕັ້ງ ແລະ ພະນັກງານ ເພື່ອສະເໜີລັດຖະມົນຕີ ກະຊວງການເງິນ ພິຈາລະນາ ຕົກລົງ ແຕ່ງຕັ້ງ, ເລື່ອນຊັ້ນ, ປົດຕໍາແໜ່ງ, ຍົກຍ້າຍໜ້າທີ່, ຍ້ອງຍໍ, ລາອອກ, ການດັດແກ້ຊັ້ນ-ຂັ້ນ ເງິນເດືອນ, ການໃຫ້ບໍານັດ, ການໃຫ້ບໍານານ, ການລາພັກ, ການປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນ, ການປະຕິບັດສິດ ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະນັກງານ-ລັດຖະກອນ ທີ່ຂຶ້ນກັບຄວາມ ຮັບຜິດຊອບຂອງຕົນ;
11. ສະເໜີອະນຸມັດຈັດຊື້ອຸປະກອນຮັບໃຊ້ຂອງກົມຕາມແຜນງົບປະມານທີ່ໄດ້ຮັບອະນຸມັດຈາກ ລັດຖະມົນຕີກະຊວງການເງິນ ແລະ ໂຄງການຊ່ວຍເຫຼືອຂອງອົງການຈັດຕັ້ງສາກົນ;
12. ຂຶ້ນແຜນໂຄງການລົງທຶນຂອງລັດ ປະຈໍາປີ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ຂອງກົມ ທີ່ຖືກຮັບຮອງຈາກສະພາແຫ່ງຊາດ ແລະ ສະເໜີເບີກຈ່າຍຄ່າໂຄງການ ຢ່າງສອດຄ່ອງຕາມ ລະບຽບການ ແລະ ນິຕິກໍາທີ່ກ່ຽວຂ້ອງ ພ້ອມທັງ ສະຫຼຸບລາຍງານການໃຊ້ຈ່າຍຕາມລະບຽບການ;
13. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ບັນດາ ແຂວງ ເພື່ອຈັດຕັ້ງປະຕິບັດ ຜົນຂອງການກວດກາ, ຜົນການກວດສອບໂຄງການລົງທຶນຂອງລັດ ພ້ອມ ທັງຄົ້ນຄວ້າມາດຕະການ, ວິທີການແກ້ໄຂ ສະເໜີລັດຖະມົນຕີກະຊວງການເງິນ ພິຈາລະນາຕົກລົງ;
14. ຄົ້ນຄວ້າ, ພິຈາລະນາຄໍາຮ້ອງ, ຄໍາສະເໜີຈາກພາກສ່ວນຕ່າງໆຕໍ່ພະນັກງານ-ລັດຖະກອນ ຫຼື ຄໍາຊີ້ແຈງ ຂອງພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງກົມ ກ່ຽວກັບການກະທໍາ ຫຼື ການຕົກລົງ ບັນຫາໃດໜຶ່ງທີ່ລະເມີດກົດໝາຍ ແລະ ລະບຽບການ ເພື່ອສະເໜີຂັ້ນເທິງພິຈາລະນາ;
15. ຄົ້ນຄວ້າ ແລະ ສະເໜີກ່ຽວກັບວຽກງານຄຸ້ມຄອງ ແລະ ກໍ່ສ້າງພະນັກງານເຊັ່ນ: ຂຶ້ນແຜນຄວາມ ຕ້ອງການພະນັກງານ, ສ້າງແຜນກໍ່ສ້າງພະນັກງານ, ປະເມີນຜົນລັດຖະກອນ, ເກັບກໍາສະຖິຕິ, ຊີວະ ປະຫວັດພະນັກງານ, ປັບປຸງກົງຈັກການຈັດຕັ້ງ ແລະ ກໍານົດຕໍາແໜ່ງງານຂອງກົມສົ່ງໃຫ້ກົມຈັດຕັ້ງ ແລະ ພະນັກງານ;
16. ປະຕິບັດສິດອື່ນ ຕາມການມອບໝາຍຂອງຄະນະນໍາກະຊວງການເງິນ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ກົມແຜນການ ມີໂຄງປະກອບກົງຈັກ 07 ພະແນກ ດັ່ງນີ້:

1. ພະແນກ ສັງລວມ ແລະ ຂໍ້ມູນຂ່າວສານ;
2. ພະແນກ ວາງແຜນພັດທະນາ;
3. ພະແນກ ວາງແຜນການລົງທຶນຂອງລັດ;
4. ພະແນກ ວາງແຜນເສດຖະກິດມະຫາພາກ;
5. ພະແນກ ວາງແຜນຂົງເຂດເສດຖະກິດ;
6. ພະແນກ ວາງແຜນຂົງເຂດສັງຄົມ;
7. ພະແນກ ວາງແຜນພັດທະນາເຂດແຄວ້ນ ແລະ ລຶບລ້າງຄວາມທຸກຍາກ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ກົມແຜນການ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກົມ 01 ທ່ານ ຮັບຜິດຊອບຕໍ່ ລັດຖະມົນຕີ ກ່ຽວກັບ ຜົນສໍາເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ; ໃນເວລາ ຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ ຮອງຫົວໜ້າກົມ ທ່ານໃດໜຶ່ງປະຈໍາການແທນ ຢ່າງເປັນລາຍລັກອັກສອນ;
2. ຮອງຫົວໜ້າກົມ ຈໍານວນໜຶ່ງ ຊ່ວຍຫົວໜ້າກົມຊີ້ນໍາວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ ຫົວໜ້າກົມ ກ່ຽວກັບ ຜົນສໍາເລັດ ແລະ ຂໍ້ຂາດຕົກບົກພ່ອງ ຂອງວຽກງານທີ່ຕົນຊີ້ນໍາ; ຮອງຫົວໜ້າກົມຜູ້ປະຈໍາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະປະຈໍາການແທນ ໃຫ້ຫົວໜ້າກົມ ຮັບຊາບພາຍຫຼັງຫົວໜ້າກົມກັບມາປະຈໍາການປົກກະຕິ;
3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການ ຈໍານວນໜຶ່ງ ຕາມການກໍານົດຕໍາແໜ່ງງານ.

ສໍາລັບ ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງ ຫຼື ໂຈະການປະຕິບັດໜ້າທີ່ຊົ່ວຄາວ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 7 ພະແນກ ສັງລວມ ແລະ ຂໍ້ມູນຂ່າວສານ**

ພະແນກ ສັງລວມ ແລະ ຂໍ້ມູນຂ່າວສານ ມີໜ້າທີ່ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ກົມໃນການສ້າງ, ຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດແຜນວຽກຂອງກົມ ແຕ່ລະໄລຍະ ແລະ ເປັນບັນນາທິການບັນດາເອກະສານຕ່າງໆຂອງກົມ ກ່ອນສະເໜີຫົວໜ້າກົມລົງລາຍເຊັນ;
2. ເປັນໃຈກາງໃນການປະສານສົມທົບກັບພະແນກຕ່າງໆ ພາຍໃນກົມ ແລະ ພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດ ແລະ ສະຫຼຸບລາຍງານວຽກງານກວດກາຂອງກົມ;
3. ເປັນໃຈກາງປະສານສົມທົບກັບບັນດາພະແນກພາຍໃນກົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຜົນການກວດກາ ຂອງອົງການກວດກາແຫ່ງລັດ ແລະ ຜົນການກວດສອບຂອງອົງການກວດສອບແຫ່ງລັດ ກ່ຽວກັບໂຄງການລົງທຶນຂອງລັດໃນຂອບເຂດທົ່ວປະເທດ;
4. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງຕ່າງໆ ທີ່ພະແນກຕົນຮັບຜິດຊອບ ຄື: (1) ສູນກາງແນວລາວສ້າງຊາດ, (2) ສູນກາງສະຫະພັນກໍາມະບານລາວ, (3) ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, (4) ສູນກາງສະຫະພັນແມ່ຍິງລາວ, (5) ຄະນະກໍາມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ, (6) ອົງການກວດກາແຫ່ງລັດ ແລະ (7) ອົງການກວດສອບແຫ່ງລັດ ເພື່ອຄົ້ນຄວ້າສ້າງແຜນ, ຕິດຕາມ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈໍາງວດ, ປະຈໍາປີ ແລະ 5 ປີແລະ ແຜນການລົງທຶນຂອງລັດ ປະຈໍາງວດ, ປະຈໍາປີ ແລະ ໄລຍະກາງ (1+2);
5. ປະສານສົມທົບກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ໃນການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDGs), ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (LDC), ຍຸດທະສາດການເຕີບໂຕສີຂຽວ ແລະ ບັນດາຍຸດທະສາດຕ່າງໆຂອງລັດຖະບານ

ລວມທັງຂອບຮ່ວມມືກັບສາກົນ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ ແລະ 5 ປີ ພ້ອມທັງຕິດຕາມ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດ;

6. ສ້າງຖານຂໍ້ມູນ, ລະບົບຕິດຕາມບັນດາຕົວຊີ້ວັດ ເພື່ອຮັບໃຊ້ໃຫ້ແກ່ການສ້າງ ແລະ ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງທີ່ພະແນກຕົນຮັບຜິດຊອບ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສັງລວມຄວາມຕ້ອງການລົງທຶນຂອງລັດ, ເຂົ້າຮ່ວມການຈັດລຽງບູລິມະສິດ, ກວດກາຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ, ຄົ້ນຄວ້ານະໂຍບາຍການລົງທຶນຂອງລັດຖະບານ ແລະ ນິຕິກຳທີ່ກ່ຽວຂ້ອງ ເພື່ອສ້າງແຜນການລົງທຶນຂອງລັດຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ພ້ອມທັງ ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດໂຄງການ, ເຂົ້າຮ່ວມໃນຄະນະຮັບຜິດຊອບໂຄງການ;
8. ເຂົ້າຮ່ວມການປະມູນ, ກວດກາການຈັດຕັ້ງປະຕິບັດໂຄງການໃນແຕ່ລະໄລຍະ, ປຶກສາບັນຫາຕ່າງໆກ່ຽວກັບການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຕາມການເຊື້ອເຊີນ ແລະ ສັງລວມລາຍງານການຈັດຕັ້ງປະຕິບັດ;
9. ຄົ້ນຄວ້າມີຄຳເຫັນຕໍ່ຮ່າງສັນຍາ, ຄົ້ນຄວ້າການສະເໜີຂໍຕໍ່ສັນຍາ ແລະ ຢັ້ງຢືນເອກະສານສະເໜີຂໍຊຳລະໂຄງການລົງທຶນຂອງລັດຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
10. ຄົ້ນຄວ້າການສະເໜີດັດແກ້ມູນຄ່າໂຄງການ, ອ່າຍທຶນ, ໂຈະ ແລະ ຍົກເລີກໂຄງການລົງທຶນຂອງລັດຕາມການສະເໜີຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ເພື່ອສະເໜີຂັ້ນເທິງພິຈາລະນາອະນຸມັດ;
11. ສ້າງ ແລະ ຄຸ້ມຄອງລະບົບຖານຂໍ້ມູນຂ່າວສານ, ບັນດານິຕິກຳຂອງກົມ ເພື່ອຮັບໃຊ້ການສ້າງ ແລະ ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການລົງທຶນຂອງລັດ; ສະໜອງຂໍ້ມູນໃຫ້ພາກສ່ວນຕ່າງໆຕາມການສະເໜີ ແລະ ສອດຄ່ອງຕາມພາລະບົດບາດຂອງກົມ;
12. ສັງລວມບັນດາຄູ່ມືໃນການສ້າງ ແລະ ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການລົງທຶນຂອງລັດ ແລະ ວຽກງານອື່ນໆ ຕາມພາລະບົດບາດຂອງກົມ ລວມທັງການຂຶ້ນແຜນຈັດຝຶກອົບຮົມເພື່ອສ້າງຂີດຄວາມສາມາດໃຫ້ພະນັກງານຂະແໜງການເງິນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ;
13. ຄຸ້ມຄອງເອກະສານຂາເຂົ້າ-ຂາອອກທຸກປະເພດຂອງກົມ ໃຫ້ເຂົ້າສູ່ລະບົບຕາມຫຼັກການປະຕູດຽວ ເພື່ອນຳສະເໜີຄະນະກົມມີຄຳເຫັນ, ສຳເນົາ, ແຈກຢາຍໃຫ້ແຕ່ລະພະແນກ ແລະ ເກັບຮັກສາເອກະສານຕ່າງໆຂອງກົມ;
14. ຮັບຜິດຊອບວຽກງານການຫັນເປັນທັນສະໄໝ, ຄຸ້ມຄອງເຄື່ອງໃຊ້ເອເລັກໂຕນິກ ແລະ ຊັບສິນຂອງກົມ;
15. ຄຸ້ມຄອງ, ນຳໃຊ້, ປັບປຸງຂໍ້ມູນ ແລະ ສະເໜີພັດທະນາ ລະບົບຄຸ້ມຄອງຖານຂໍ້ມູນພະນັກງານ-ລັດຖະກອນ ພາຍໃຕ້ການຄຸ້ມຄອງຂອງພະແນກ ໃນແຕ່ໄລຍະ ຕາມການແບ່ງຂັ້ນຄຸ້ມຄອງ;
16. ສະຫຼຸບສັງລວມ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງກົມ, ພະແນກ ເປັນປະຈຳ ອາທິດ, ເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ;
17. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 8 ພະແນກ ວາງແຜນພັດທະນາ**

ພະແນກ ວາງແຜນພັດທະນາ ມີໜ້າທີ່ດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງຄົ້ນຄວ້າຜັນຂະຫຍາຍບັນດາແນວທາງນະໂຍບາຍ, ມະຕິ, ຄຳສັ່ງ ເພື່ອກຳນົດທິດທາງ, ເປົ້າໝາຍ, ຄາດໝາຍສູ້ຊົນ, ວຽກງານຈຸດສຸມ, ກົນໄກ ແລະ ມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ສອດຄ່ອງກັບແຜນຍຸດທະສາດ ແລະ ວິໄສທັດການພັດທະນາແຫ່ງຊາດໃນແຕ່ລະໄລຍະ;
2. ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄ້ວາຮ່າງດຳລັດ, ຄຳສັ່ງຂອງນາຍົກລັດຖະມົນຕີ, ບົດແນະນຳ ແລະ ແຈ້ງການຕ່າງໆ ຂອງລັດຖະມົນຕີກະຊວງການເງິນ ໃນການສ້າງ ແລະ ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດ ໃນແຕ່ລະໄລຍະ;
3. ເປັນເຈົ້າການໃນການປະສານສົມທົບກັບບັນດາພະແນກພາຍໃນກົມ ແລະ ພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າສ້າງ, ຕິດຕາມ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະງວດ, ປະຈຳປີ ແລະ 5 ປີ;
4. ຮ່າງບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 3 ເດືອນ, 6 ເດືອນ, 9 ເດືອນ, ໝົດປີ, ສະຫຼຸບຂາດຕົວ ແລະ ທິດທາງແຜນການ ເພື່ອລາຍງານຕໍ່ກອງປະຊຸມລັດຖະບານ, ກອງປະຊຸມກົມການເມືອງ, ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກ, ກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມອື່ນໆ;
5. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງຕ່າງໆ ທີ່ພະແນກຕົນຮັບຜິດຊອບ ຄື: (1) ສຳນັກງານປະທານປະເທດ, (2) ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, (3) ອົງການກາແດງລາວ, (4) ຫ້ອງວ່າການສູນກາງພັກ, (5) ຄະນະໂຄສະນາອົບຮົມສູນກາງພັກ ແລະ (6) ຄະນະຈັດຕັ້ງສູນກາງພັກ ເພື່ອຄົ້ນຄວ້າສັງລວມສ້າງແຜນ, ຕິດຕາມ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະ ກິດ-ສັງຄົມແຫ່ງຊາດ ປະຈຳງວດ, ປະຈຳປີ ແລະ 5 ປີ ແລະ ແຜນການລົງທຶນຂອງລັດປະຈຳງວດ, ປະຈຳປີ ແລະ ໄລຍະກາງ (1+2);
6. ປະສານສົມທົບກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ໃນການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDGs), ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (LDC), ຍຸດທະສາດການເຕີບໂຕສີຂຽວ ແລະ ບັນດາຍຸດທະສາດຕ່າງໆຂອງລັດຖະບານລວມທັງຂອບການຮ່ວມມືກັບສາກົນ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ ແລະ 5 ປີ ພ້ອມທັງຕິດຕາມ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດ;
7. ສ້າງຖານຂໍ້ມູນ, ລະບົບຕິດຕາມບັນດາຕົວຊີ້ວັດ ເພື່ອຮັບໃຊ້ໃຫ້ແກ່ການສ້າງ ແລະ ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ແລະ ສັງລວມທັງໝົດກັບທຸກພະແນກພາຍໃນກົມ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສັງລວມຄວາມຕ້ອງການລົງທຶນຂອງລັດ, ເຂົ້າຮ່ວມການຈັດລຽງບູລິມະສິດ, ກວດກາຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຄົ້ນຄວ້ານະໂຍບາຍການລົງທຶນຂອງລັດຖະບານ ແລະ ນິຕິກຳທີ່ກ່ຽວຂ້ອງ ເພື່ອສ້າງແຜນການລົງທຶນຂອງລັດຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ພ້ອມທັງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດໂຄງການ, ເຂົ້າຮ່ວມໃນຄະນະຮັບຜິດຊອບໂຄງການ;
9. ເຂົ້າຮ່ວມການປະມູນ, ກວດກາການຈັດຕັ້ງປະຕິບັດໂຄງການໃນແຕ່ລະໄລຍະ, ປຶກສາບັນຫາຕ່າງໆກ່ຽວກັບການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຕາມການເຊື້ອເຊີນ ແລະ ສັງລວມລາຍງານການຈັດຕັ້ງປະຕິບັດ;

10. ຄົ້ນຄວ້າມີຄຳເຫັນຕໍ່ຮ່າງສັນຍາ, ຄົ້ນຄວ້າການສະເໜີຂໍຕໍ່ສັນຍາ ແລະ ຢັ້ງຢືນເອກະສານສະເໜີຂໍຊຳລະໂຄງການລົງທຶນຂອງລັດຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
11. ຄົ້ນຄວ້າການສະເໜີດັດແກ້ມູນຄ່າໂຄງການ, ຍ້າຍທຶນ, ໂຈະ ແລະ ຍົກເລີກໂຄງການລົງທຶນຂອງລັດ ຕາມການສະເໜີຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ໃຫ້ສອດຄ່ອງຕາມກົດ ໝາຍວ່າດ້ວຍການລົງທຶນຂອງລັດ ເພື່ອສະເໜີຂັ້ນເທິງພິຈາລະນາອະນຸມັດ;
12. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອສ້າງວິທີວິທະຍາການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂະແໜງການ;
13. ຄຸ້ມຄອງ, ນຳໃຊ້, ປັບປຸງຂໍ້ມູນ ແລະ ສະເໜີພັດທະນາ ລະບົບຄຸ້ມຄອງຖານຂໍ້ມູນພະນັກງານ-ລັດຖະກອນ ພາຍໃຕ້ການຄຸ້ມຄອງຂອງພະແນກ ໃນແຕ່ໄລຍະ ຕາມການແບ່ງຂັ້ນຄຸ້ມຄອງ;
14. ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຂອງພະແນກ ເປັນປະຈຳ ອາທິດ, ເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ;
15. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 9 ພະແນກ ວາງແຜນການລົງທຶນຂອງລັດ**

ພະແນກ ວາງແຜນການລົງທຶນຂອງລັດ ມີໜ້າທີ່ດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງຄົ້ນຄວ້າຜັນຂະຫຍາຍບັນດາແນວທາງນະໂຍບາຍ, ມະຕິ, ຄຳສັ່ງ ເພື່ອກຳນົດທິດທາງ, ເປົ້າໝາຍ, ຄາດໝາຍສູ້ຊົນ, ວຽກງານຈຸດສຸມ, ກົນໄກ ແລະ ມາດຕະການຈັດຕັ້ງປະຕິບັດແຜນລົງທຶນຂອງລັດ ໃຫ້ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;
2. ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄົ້ນຄ້ວາແຈ້ງການ, ບົດແນະນຳ, ແລະ ນິຕິກຳຕ່າງໆ ກ່ຽວກັບການສ້າງ ແລະ ຄຸ້ມຄອງແຜນການລົງທຶນຂອງລັດ ໃນແຕ່ລະໄລຍະ;
3. ຄົ້ນຄວ້ານະໂຍບາຍ ແກ້ໄຂໜີ້ສິນການລົງທຶນຂອງລັດ ເພື່ອສະເໜີລັດຖະມົນຕີກະຊວງການເງິນພິຈາລະນາໃນແຕ່ລະໄລຍະ;
4. ຄົ້ນຄວ້ານະໂຍບາຍ, ກົນໄກ ແລະ ວິທີການ ໃນການຈັດສັນງົບປະມານ ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການ ຟື້ນຟູໂຄງລ່າງພື້ນຖານ ທີ່ໄດ້ຮັບຜົນກະທົບຈາກໄພພິບັດ ເພື່ອສະເໜີທ່ານລັດຖະມົນຕີກະຊວງການເງິນພິຈາລະນາໃນແຕ່ລະໄລຍະ;
5. ປະສານສົມທົບກັບບັນດາພະແນກພາຍໃນກົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າສ້າງແຜນລົງທຶນຂອງລັດ, ຈັດບູລິມະສິດ ແລະ ຄັດສົມ ໂຄງການລົງທຶນຂອງລັດ ພ້ອມທັງຕິດຕາມແລະ ສະຫຼຸບຕີລາຄາລວມການຈັດຕັ້ງປະຕິບັດ ແຜນການລົງທຶນຂອງລັດ ໃນແຕ່ລະງວດ, ປະຈຳປີ ຂອງບັນດາກະຊວງ-ອົງການລັດທຽບເທົ່າກະຊວງ ແລະ ບັນດາແຂວງ;
6. ສ້າງບົດລາຍງານການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ 3 ເດືອນ, 6 ເດືອນ, 9 ເດືອນ, ໝົດປີ ແລະ ສະຫຼຸບຂາດຕົວ ເພື່ອລາຍງານຂັ້ນເທິງຢ່າງເປັນປົກກະຕິ;
7. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງຕ່າງໆ ທີ່ພະແນກຕົນຮັບຜິດຊອບ ຄື: (1) ສະພາແຫ່ງຊາດ, (2) ກະຊວງປ້ອງກັນປະເທດ, (3) ກະຊວງປ້ອງກັນຄວາມສະຫງົບ, (4) ວິທະຍາຄານໄກສອນພົມວິຫານ ແລະ (5) ສະຫະພັນນັກຮົບເກົ່າແຫ່ງຊາດລາວ ເພື່ອຄົ້ນຄວ້າສັງລວມສ້າງແຜນ, ຕິດຕາມ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງ

ຊາດ ປະຈຳງວດ, ປະຈຳປີ ແລະ 5 ປີ ແລະ ແຜນການລົງທຶນຂອງລັດ ປະຈຳງວດ, ປະຈຳປີ ແລະ ໄລຍະ ກາງ (1+2);

8. ປະສານສົມທົບກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ໃນການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDGs), ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (LDC), ຍຸດທະສາດການເຕີບໂຕສີຂຽວ ແລະ ບັນດາຍຸດທະສາດຕ່າງໆຂອງລັດຖະບານ ລວມທັງຂອບຮ່ວມມືກັບສາກົນ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ ແລະ 5 ປີ ພ້ອມທັງຕິດຕາມ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດ;
9. ສ້າງຖານຂໍ້ມູນ, ລະບົບຕິດຕາມບັນດາຕົວຊີ້ວັດ ເພື່ອຮັບໃຊ້ໃຫ້ແກ່ການສ້າງ ແລະ ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ;
10. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສັງລວມຄວາມຕ້ອງການລົງທຶນຂອງລັດ, ເຂົ້າຮ່ວມການຈັດລຽງບູລິມະສິດ, ກວດກາຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຄົ້ນຄວ້ານະໂຍບາຍການລົງທຶນຂອງລັດຖະບານ ແລະ ນິຕິກຳທີ່ກ່ຽວຂ້ອງ ເພື່ອສ້າງແຜນການລົງທຶນຂອງລັດຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ພ້ອມທັງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດໂຄງການ, ເຂົ້າຮ່ວມໃນຄະນະຮັບຜິດຊອບໂຄງການ;
11. ເຂົ້າຮ່ວມການປະມູນ, ກວດກາການຈັດຕັ້ງປະຕິບັດໂຄງການໃນແຕ່ລະໄລຍະ, ປຶກສາບັນຫາຕ່າງໆກ່ຽວກັບການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຕາມການເຊື້ອເຊີນ ແລະ ສັງລວມລາຍງານການຈັດຕັ້ງປະຕິບັດ;
12. ຄົ້ນຄວ້າມີຄຳເຫັນຕໍ່ຮ່າງສັນຍາ, ຄົ້ນຄວ້າການສະເໜີຕໍ່ສັນຍາ ແລະ ຢັ້ງຢືນເອກະສານສະເໜີຂໍຊຳລະໂຄງການລົງທຶນຂອງລັດຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
13. ຄົ້ນຄວ້າການສະເໜີດັດແກ້ມູນຄ່າໂຄງການ, ອວ່າຍທຶນ, ໂຈະ ແລະ ຍົກເລີກໂຄງການລົງທຶນຂອງລັດຕາມການສະເໜີຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ເພື່ອສະເໜີຂັ້ນເທິງພິຈາລະນາອະນຸມັດ;
14. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອສ້າງວິທີວິທະຍາການສ້າງ ແລະ ຄຸ້ມຄອງການລົງທຶນຂອງລັດ;
15. ຄຸ້ມຄອງ, ນຳໃຊ້, ປັບປຸງຂໍ້ມູນ ແລະ ສະເໜີພັດທະນາ ລະບົບຄຸ້ມຄອງຖານຂໍ້ມູນພະນັກງານ-ລັດຖະກອນ ພາຍໃຕ້ການຄຸ້ມຄອງຂອງພະແນກ ໃນແຕ່ໄລຍະ ຕາມການແບ່ງຂັ້ນຄຸ້ມຄອງ;
16. ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຂອງພະແນກ ເປັນປະຈຳ ອາທິດ, ເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ;
17. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 10 ພະແນກວາງ ແຜນເສດຖະກິດມະຫາພາກ**

ພະແນກ ວາງແຜນເສດຖະກິດມະຫາພາກ ມີໜ້າທີ່ດັ່ງນີ້:

1. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າກຳນົດທິດທາງ, ນະໂຍບາຍ ແລະ ຄາດໝາຍທາງດ້ານເສດຖະກິດມະຫາພາກ ເປັນຕົ້ນ: ການເຕີບໂຕຂອງເສດຖະກິດ, ດ້ານການເງິນ-ດ້ານເງິນຕາ ປະຈຳປີ ແລະ 5 ປີ ພ້ອມທັງຕິດຕາມ ແລະ ສະຫຼຸບລາຍງານ ເປັນແຕ່ລະໄລຍະ ເພື່ອຮັບໃຊ້ການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

2. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສັງລວມລາຍງານ ການລົງທຶນເອກະຊົນພາຍໃນ-ຕ່າງປະເທດ, ການຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ແຫຼ່ງທຶນອື່ນໆ ເຂົ້າໃນບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ;
3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າຕິດຕາມ ແລະ ດຸ່ນດ່ຽງມະຫາພາກ: ການດຸນດ່ຽງແຫຼ່ງທຶນ, ດຸນດ່ຽງງົບປະມານ, ດຸນດ່ຽງການຄ້າຂາເຂົ້າ-ຂາອອກ, ດຸນດ່ຽງແຮງງານ ປະຈໍາປີ ແລະ ໄລຍະ 5 ປີ; ນອກຈາກນັ້ນ, ກໍປະສານພາກສ່ວນກ່ຽວຂ້ອງຄົ້ນຄວ້າດຸ່ນດ່ຽງຄວາມຕ້ອງການ ແລະ ການສະໜອງ, ການສະສົມ ແລະ ການໃຊ້ຈ່າຍ, ການຜະລິດ ແລະ ການຊົມໃຊ້ຂອງສັງຄົມ;
4. ຄົ້ນຄວ້າສ້າງ, ຊຸກຍູ້, ຕິດຕາມ, ສະຫຼຸບລາຍງານການຈັດຕັ້ງປະຕິບັດຍຸດທະສາດການເງິນ ເພື່ອສະໜັບສະໜູນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ໃນແຕ່ລະໄລຍະ;
5. ປະສານສົມທົບກັບທະນາຄານແຫ່ງ ສປປ ລາວ ເພື່ອຄົ້ນຄວ້າກໍານົດຄາດໝາຍເສດຖະກິດມະຫາພາກດ້ານເງິນຕາ ເຂົ້າໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
6. ປະສານສົມທົບກັບສູນສະຖິຕິແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງ ເພື່ອສະຫຼຸບຕີລາຄາການເຕີບໂຕທາງດ້ານເສດຖະກິດ ແລະ ອັດຕາເງິນເຟີ້ ປະຈໍາງວດ, ປະຈໍາປີ ແລະ 5 ປີ;
7. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຕິດຕາມສະພາບ ແລະ ທ່າອ່ຽງດ້ານມະຫາພາກ, ສະພາບເສດຖະກິດພາຍໃນ, ພາກພື້ນ ແລະ ສາກົນ ເພື່ອເປັນຂໍ້ມູນໃນການຄົ້ນຄວ້າມາດຕະການ ແລະ ນະໂຍບາຍໃນການຄຸ້ມຄອງເສດຖະກິດມະຫາພາກ ແລະ ການຂະຫຍາຍຕົວຂອງເສດຖະກິດ ໃຫ້ໄປຕາມແຜນການກໍານົດໄວ້ ປະຈໍາປີ ແລະ 5 ປີ;
8. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານຂອງໜ່ວຍງານເສດຖະກິດມະຫາພາກ ພາຍໃຕ້ຂອບວຽກງານຂອງຂະບວນການໂຕະມົນ;
9. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງຕ່າງໆ ທີ່ພະແນກຕົນຮັບຜິດຊອບ ຄື: (1) ກະຊວງການເງິນ, (2) ທະນາຄານແຫ່ງ ສປປ ລາວ (3) ສູນສະຖິຕິແຫ່ງຊາດ, (4) ກະຊວງການຕ່າງປະເທດ, (5) ຄະນະພົວພັນຕ່າງປະເທດສູນກາງພັກ, (6) ສະຖາບັນຄົ້ນຄວ້າວິທະຍາສາດເສດຖະກິດ-ສັງຄົມແຫ່ງຊາດ ແລະ (7) ສະຖາບັນການເມືອງການປົກຄອງແຫ່ງຊາດ ເພື່ອຄົ້ນຄວ້າສັງລວມສ້າງແຜນ, ຕິດຕາມ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈໍາງວດ, ປະຈໍາປີ ແລະ 5 ປີ ແລະ ແຜນການລົງທຶນຂອງລັດ ປະຈໍາງວດ, ປະຈໍາປີ ແລະ ໄລຍະກາງ (1+2);
10. ປະສານສົມທົບກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ໃນການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDGs), ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (LDC), ຍຸດທະສາດການເຕີບໂຕສີຂຽວ ແລະ ບັນດາຍຸດທະສາດຕ່າງໆຂອງລັດຖະບານລວມທັງຂອບຮ່ວມມືກັບສາກົນ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈໍາປີ ແລະ 5 ປີ ພ້ອມທັງຕິດຕາມ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດ;
11. ສ້າງຖານຂໍ້ມູນ, ລະບົບຕິດຕາມບັນດາຕົວຊີ້ວັດ ເພື່ອຮັບໃຊ້ໃຫ້ແກ່ການສ້າງ ແລະ ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ;
12. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສັງລວມຄວາມຕ້ອງການລົງທຶນຂອງລັດ, ເຂົ້າຮ່ວມການຈັດລຽງບູລິມະສິດ, ກວດກາຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຄົ້ນຄວ້ານະໂຍບາຍການລົງທຶນຂອງລັດຖະບານ ແລະ ນິຕິກໍາທີ່ກ່ຽວຂ້ອງ ເພື່ອສ້າງແຜນການລົງທຶນ

ຂອງລັດຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ພ້ອມທັງ ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດໂຄງການ, ເຂົ້າຮ່ວມໃນຄະນະຮັບຜິດຊອບໂຄງການ;

13. ເຂົ້າຮ່ວມການປະມູນ, ກວດກາການຈັດຕັ້ງປະຕິບັດໂຄງການໃນແຕ່ລະໄລຍະ, ປຶກສາບັນຫາຕ່າງໆ ກ່ຽວກັບການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຕາມການເຊື້ອເຊີນ ແລະ ສັງລວມ ລາຍງານການຈັດຕັ້ງປະຕິບັດ;
14. ຄົ້ນຄວ້າມີຄຳເຫັນຕໍ່ຮ່າງສັນຍາ, ຄົ້ນຄວ້າການສະເໜີຂໍຕໍ່ສັນຍາ ແລະ ຢັ້ງຢືນເອກະສານສະເໜີຂໍຊຳລະ ໂຄງການລົງທຶນຂອງລັດຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
15. ຄົ້ນຄວ້າການສະເໜີດັດແກ້ມູນຄ່າໂຄງການ, ອ່ວຍທຶນ, ໂຈະ ແລະ ຍົກເລີກໂຄງການລົງທຶນຂອງລັດ ຕາມການສະເໜີຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ເພື່ອສະເໜີຂັ້ນເທິງພິຈາລະນາອະນຸມັດ;
16. ປະສານສົມທົບພາກສ່ວນກ່ຽວຂ້ອງໃນການສ້າງ, ຕິດຕາມ ແລະ ຈັດຕັ້ງປະຕິບັດວຽກງານການເຕີບໂຕ ສີຂຽວ;
17. ຄຸ້ມຄອງ, ນຳໃຊ້, ປັບປຸງຂໍ້ມູນ ແລະ ສະເໜີພັດທະນາ ລະບົບຄຸ້ມຄອງຖານຂໍ້ມູນພະນັກງານ-ລັດຖະກອນ ພາຍໃຕ້ການຄຸ້ມຄອງຂອງພະແນກ ໃນແຕ່ໄລຍະ ຕາມການແບ່ງຂັ້ນຄຸ້ມຄອງ;
18. ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຂອງພະແນກ ເປັນປະຈຳ ອາທິດ, ເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ;
19. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 11 ພະແນກ ວາງແຜນຂົງເຂດເສດຖະກິດ**

ພະແນກ ວາງແຜນຂົງເຂດເສດຖະກິດ

1. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງຕ່າງໆ ທີ່ພະແນກຕົນຮັບຜິດຊອບ ຄື: (1) ກະຊວງກະສິກຳ-ປ່າໄມ້ ແລະ ສິ່ງແວດລ້ອມ, (2) ກະຊວງອຸດສາຫະກຳ ແລະ ການຄ້າ, (3) ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ (4) ກະຊວງເຕັກໂນໂລຊີ ແລະ ການສື່ສານ ເພື່ອຄົ້ນຄວ້າ ສັງລວມສ້າງແຜນ, ຕິດຕາມ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳງວດ, ປະຈຳປີ ແລະ 5 ປີ ແລະ ແຜນການລົງທຶນຂອງລັດ ປະຈຳງວດ, ປະຈຳປີ ແລະ ໄລຍະກາງ (1+2);
2. ປະສານສົມທົບກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ໃນການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDGs), ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (LDC), ຍຸດທະສາດການເຕີບໂຕສີຂຽວ ແລະ ບັນດາຍຸດທະສາດຕ່າງໆຂອງລັດຖະບານ ລວມທັງຂອບຮ່ວມມືກັບ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ ແລະ 5 ປີ ພ້ອມທັງ ຕິດຕາມ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດ;
3. ສ້າງຖານຂໍ້ມູນ, ລະບົບຕິດຕາມບັນດາຕົວຊີ້ວັດ ເພື່ອຮັບໃຊ້ໃຫ້ແກ່ການສ້າງ ແລະ ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ;
4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສັງລວມຄວາມຕ້ອງການລົງທຶນຂອງລັດ, ເຂົ້າຮ່ວມການຈັດລຽງບູລິມະສິດ, ກວດກາຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ນະໂຍບາຍການລົງທຶນຂອງລັດຖະບານ ແລະ ນິຕິກຳທີ່ກ່ຽວຂ້ອງ ເພື່ອສ້າງແຜນການລົງທຶນຂອງລັດ

ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕິນຮັບຜິດຊອບ ພ້ອມທັງ ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດໂຄງການ, ເຂົ້າຮ່ວມໃນຄະນະຮັບຜິດຊອບໂຄງການ;

5. ເຂົ້າຮ່ວມການປະມູນ, ກວດກາການຈັດຕັ້ງປະຕິບັດໂຄງການໃນແຕ່ລະໄລຍະ, ປຶກສາບັນຫາຕ່າງໆ ກ່ຽວກັບການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຕາມການເຊື້ອເຊີນ ແລະ ສັງລວມ ລາຍງານການຈັດຕັ້ງປະຕິບັດ;
6. ຄົ້ນຄວ້າມີຄຳເຫັນຕໍ່ຮ່າງສັນຍາ, ຄົ້ນຄວ້າການສະເໜີຂໍຕໍ່ສັນຍາ ແລະ ຢັ້ງຢືນເອກະສານສະເໜີຂໍຊຳລະ ໂຄງການລົງທຶນຂອງລັດຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕິນຮັບຜິດຊອບ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
7. ຄົ້ນຄວ້າການສະເໜີດັດແກ້ມູນຄ່າໂຄງການ, ອ່າຍທຶນ, ໂຈະ ແລະ ຍົກເລີກໂຄງການລົງທຶນຂອງລັດ ຕາມການສະເໜີຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕິນຮັບຜິດຊອບ ໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ເພື່ອສະເໜີຂັ້ນເທິງພິຈາລະນາອະນຸມັດ;
8. ເຂົ້າຮ່ວມໃນການຄົ້ນຄວ້າສ້າງນະໂຍບາຍ ແລະ ຕິດຕາມການຈັດຕັ້ງປະຕິບັດບັນດາແລວເສດຖະກິດ ແລະ ຫຼັງມເສດຖະກິດຕ່າງໆ ເພື່ອລາຍງານລັດຖະບານເປັນແຕ່ລະໄລຍະ;
9. ຄຸ້ມຄອງ, ນຳໃຊ້, ປັບປຸງຂໍ້ມູນ ແລະ ສະເໜີພັດທະນາ ລະບົບຄຸ້ມຄອງຖານຂໍ້ມູນພະນັກງານ-ລັດຖະກອນ ພາຍໃຕ້ການຄຸ້ມຄອງຂອງພະແນກ ໃນແຕ່ໄລຍະ ຕາມການແບ່ງຂັ້ນຄຸ້ມຄອງ;
10. ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຂອງພະແນກ ເປັນປະຈຳ ອາທິດ, ເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ;
11. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 12 ພະແນກ ວາງແຜນຂົງເຂດສັງຄົມ**

ພະແນກ ວາງແຜນຂົງເຂດສັງຄົມ ມີໜ້າທີ່ດັ່ງນີ້:

1. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງຕ່າງໆ ທີ່ພະແນກຕິນຮັບຜິດຊອບຄື: (1) ກະຊວງສຶກສາທິການ ແລະ ກິລາ, (2) ກະຊວງສາທາລະນະສຸກ, (3) ກະຊວງວັດທະນາທຳ ແລະ ທ່ອງທ່ຽວ, (4) ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, (5) ກະຊວງຍຸຕິທຳ, (6) ສານປະຊາຊົນສູງສຸດ, (7) ອົງການໄອຍະການປະຊາຊົນສູງສຸດ ແລະ (8) ມະຫາວິທະຍາໄລແຫ່ງຊາດ ເພື່ອຄົ້ນຄວ້າ ສັງລວມສ້າງ ແຜນ, ຕິດຕາມ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳ ງວດ, ປະຈຳປີ ແລະ 5 ປີ ແລະ ແຜນການລົງທຶນຂອງລັດ ປະຈຳງວດ, ປະຈຳປີ ແລະ ໄລຍະກາງ (1+2);
2. ປະສານສົມທົບກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕິນຮັບຜິດຊອບ ໃນການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDGs), ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (LDC), ຍຸດທະສາດການເຕີບໂຕສີຂຽວ ແລະ ບັນດາຍຸດທະສາດຕ່າງໆຂອງລັດຖະບານ ລວມທັງຂອບຮ່ວມມືກັບສາກົນ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ ແລະ 5 ປີ ພ້ອມທັງຕິດຕາມ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດ;
3. ສ້າງຖານຂໍ້ມູນ, ລະບົບຕິດຕາມບັນດາຕົວຊີ້ວັດ ເພື່ອຮັບໃຊ້ໃຫ້ແກ່ການສ້າງ ແລະ ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕິນຮັບຜິດຊອບຮັບຜິດຊອບ;
4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສັງລວມຄວາມຕ້ອງການລົງທຶນຂອງລັດ, ເຂົ້າຮ່ວມການຈັດລຽງບູລິມະສິດ, ກວດກາຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ,

ຄົ້ນຄວ້ານະໂຍບາຍການລົງທຶນຂອງລັດຖະບານ ແລະ ນິຕິກຳທີ່ກ່ຽວຂ້ອງ ເພື່ອສ້າງແຜນການລົງທຶນຂອງລັດຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ພ້ອມທັງຕິດຕາມ, ຊຸກຍູ້ການຈັດ ຕັ້ງປະຕິບັດໂຄງການ, ເຂົ້າຮ່ວມໃນຄະນະຮັບຜິດຊອບໂຄງການ;

5. ເຂົ້າຮ່ວມການປະມູນ, ກວດກາການຈັດຕັ້ງປະຕິບັດໂຄງການໃນແຕ່ລະໄລຍະ, ປຶກສາບັນຫາຕ່າງໆກ່ຽວກັບການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຕາມການເຊື້ອເຊີນ ແລະ ສັງລວມລາຍງານການຈັດຕັ້ງປະຕິບັດ;
6. ຄົ້ນຄວ້າມີຄຳເຫັນຕໍ່ຮ່າງສັນຍາ, ຄົ້ນຄວ້າການສະເໜີຂໍຕໍ່ສັນຍາ ແລະ ຢັ້ງຢືນເອກະສານສະເໜີຂໍຊຳລະໂຄງການລົງທຶນຂອງລັດຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
7. ຄົ້ນຄວ້າການສະເໜີດັດແກ້ມູນຄ່າໂຄງການ, ອວ່າຍທຶນ, ໂຈະ ແລະ ຍົກເລີກໂຄງການລົງທຶນຂອງລັດຕາມການສະເໜີຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ພະແນກຕົນຮັບຜິດຊອບ ໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ເພື່ອສະເໜີຂັ້ນເທິງພິຈາລະນາອະນຸມັດ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງສ້າງ ແລະ ເຜີຍແຜ່ ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ;
9. ປະສານງານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຊັບສິນດ້ານມະນຸດ;
10. ຄຸ້ມຄອງ, ນຳໃຊ້, ປັບປຸງຂໍ້ມູນ ແລະ ສະເໜີພັດທະນາ ລະບົບຄຸ້ມຄອງຖານຂໍ້ມູນພະນັກງານ-ລັດຖະກອນ ພາຍໃຕ້ການຄຸ້ມຄອງຂອງພະແນກ ໃນແຕ່ໄລຍະ ຕາມການແບ່ງຂັ້ນຄຸ້ມຄອງ;
11. ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຂອງພະແນກ ເປັນປະຈຳ ອາທິດ, ເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ;
12. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 13 ພະແນກ ວາງແຜນພັດທະນາເຂດແຄວ້ນ ແລະ ລຶບລ້າງຄວາມທຸກຍາກ**

ພະແນກ ວາງແຜນພັດທະນາເຂດແຄວ້ນ ແລະ ລຶບລ້າງຄວາມທຸກຍາກ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າກຳນົດທິດທາງ, ຄາດໝາຍ, ວຽກງານຈຸດສຸມການພັດທະນາເສດຖະກິດ-ສັງຄົມ ຂອງນະຄອນຫຼວງ ແລະ ບັນດາແຂວງ ແລະ ຕິດຕາມການຈັດຕັ້ງປະຕິບັດ ເພື່ອສະຫຼຸບລາຍງານ ເປັນແຕ່ລະໄລຍະ;
2. ຄົ້ນຄວ້າສ້າງແຜນພັດທະນາເຂດແຄວ້ນ ພ້ອມທັງຕິດຕາມການຈັດຕັ້ງປະຕິບັດ ເພື່ອສະຫຼຸບລາຍງານເປັນແຕ່ລະໄລຍະ;
3. ຄົ້ນຄວ້າຜັນຂະຫຍາຍນະໂຍບາຍພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ລວມທັງນະໂຍບາຍອື່ນໆທີ່ຕິດພັນ ເພື່ອຮັບໃຊ້ໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ ແລະ 5 ປີ;
4. ເຂົ້າຮ່ວມໃນການຄົ້ນຄວ້າສ້າງນະໂຍບາຍ, ແຜນຍຸດທະສາດ, ແຜນງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ພ້ອມທັງຕິດຕາມການຈັດຕັ້ງປະຕິບັດແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ; ວິເຄາະ, ວິໄຈ ແລະ ສະຫຼຸບລາຍງານເປັນແຕ່ລະງວດ, ປະຈຳປີ, ກາງສະໄໝ ແລະ 5 ປີ;
5. ປະສານສົມທົບກັບນະຄອນຫຼວງວຽງຈັນ, ບັນດາແຂວງ ແລະ ພາກສ່ວນຮັບຜິດຊອບວຽກພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ ເພື່ອຄົ້ນຄວ້າສ້າງແຜນ, ຕິດຕາມ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳງວດ, ປະຈຳປີ ແລະ 5 ປີ ແລະ ແຜນການລົງທຶນຂອງລັດ ປະຈຳງວດ, ປະຈຳປີ ແລະ ໄລຍະກາງ (1+2);

6. ປະສານສົມທົບກັບ ບັນດາແຂວງ, ນະຄອນຫຼວງ ໃນການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDGs), ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (LDC), ຍຸດທະສາດການເຕີບໂຕສີຂຽວ ແລະ ບັນດາຍຸດທະສາດຕ່າງໆຂອງລັດຖະບານ ລວມທັງຂອບຮ່ວມມືກັບສາກົນ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈໍາປີ ແລະ 5 ປີ ພ້ອມທັງຕິດຕາມ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດ;
7. ສ້າງຖານຂໍ້ມູນ, ລະບົບຕິດຕາມບັນດາຕົວຊີ້ວັດ ເພື່ອຮັບໃຊ້ໃຫ້ແກ່ການສ້າງ ແລະ ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ບັນດາແຂວງ, ນະຄອນຫຼວງ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງສັງລວມຄວາມຕ້ອງການລົງທຶນຂອງລັດ, ເຂົ້າຮ່ວມການຈັດລຽງບູລິມະສິດ, ກວດກາຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ, ນະໂຍບາຍການລົງທຶນຂອງລັດຖະບານ ແລະ ນິຕິກໍາທີ່ກ່ຽວຂ້ອງ ເພື່ອສ້າງແຜນການລົງທຶນຂອງລັດ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ;
9. ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດໂຄງການ, ເຂົ້າຮ່ວມໃນຄະນະຮັບຜິດຊອບໂຄງການ ຫຼື ເຂົ້າຮ່ວມການປະມູນ, ກວດກາການຈັດຕັ້ງປະຕິບັດໂຄງການໂຄງການ, ເຈລະຈາສັນຍາ, ປຶກສາບັນຫາຕ່າງໆກ່ຽວກັບການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ສໍາລັບວຽກພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ພ້ອມທັງສັງລວມລາຍງານການຈັດຕັ້ງປະຕິບັດເປັນແຕ່ລະໄລຍະ;
10. ຄົ້ນຄວ້າມີຄໍາເຫັນຕໍ່ຮ່າງສັນຍາ, ຄົ້ນຄວ້າການສະເໜີຂໍຕໍ່ສັນຍາ ແລະ ຢັ້ງຢືນເອກະສານສະເໜີຂໍຊໍາລະໂຄງການລົງທຶນຂອງລັດ ສໍາລັບວຽກພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ທີ່ສູນກາງຄຸ້ມຄອງໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
11. ຄົ້ນຄວ້າການສະເໜີດັດແກ້ມູນຄ່າໂຄງການ, ອວ່າຍທຶນ, ໂຈະ ແລະ ຍົກເລີກໂຄງການລົງທຶນຂອງລັດຕາມການສະເໜີຂອງນະຄອນຫຼວງວຽງຈັນ, ບັນດາແຂວງ, ວຽກພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ທີ່ສູນກາງຄຸ້ມຄອງ ໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ເພື່ອສະເໜີຂັ້ນເທິງພິຈາລະນາອະນຸມັດ;
12. ຜັນຂະຫຍາຍນະໂຍບາຍ 3 ສ້າງ ເຂົ້າສູ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ພ້ອມທັງຕິດຕາມ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດ;
13. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອສ້າງວິທີວິທະຍາການສ້າງແຜນພັດທະນາເຂດແຄ້ວນ, ແຜນພັດທະນາຂັ້ນແຂວງ, ຂັ້ນເມືອງ, ຂັ້ນຕາແສງ ແລະ ບ້ານ;
11 ຄຸ້ມຄອງ, ນໍາໃຊ້, ປັບປຸງຂໍ້ມູນ ແລະ ສະເໜີພັດທະນາ ລະບົບຄຸ້ມຄອງຖານຂໍ້ມູນພະນັກງານ-ລັດຖະກອນ ພາຍໃຕ້ການຄຸ້ມຄອງຂອງພະແນກ ໃນແຕ່ໄລຍະ ຕາມການແບ່ງຂັ້ນຄຸ້ມຄອງ;
12 ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຂອງພະແນກ ເປັນປະຈໍາ ອາທິດ, ເດືອນ, 3 ເດືອນ, 6 ເດືອນ ແລະ ປະຈໍາປີ;
13 ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 14 ຫຼັກການ

1. ປະຕິບັດຫຼັກການ ລວມສູນປະຊາທິປະໄຕ, ລະບອບຫົວໜ້າດຽວ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ທຸກລະດັບ;

2. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ ແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ຫຼັກການລວມຂອງພັກ-ລັດຖະບານ;
3. ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ, ແຜນ 05 ປີ ແລະ ແຜນການປະຈຳປີ ຂອງກະຊວງການເງິນ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ ແລະ ມີປະສິດທິພາບ;
4. ຮັບຜິດຊອບຕໍ່ຜົນໄດ້-ຜົນເສຍ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ.

**ມາດຕາ 15 ແບບແຜນວິທີເຮັດວຽກ**

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການ ລະອຽດ; ມີການວາງແຜນທິດທາງ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ;
2. ມີກົນໄກ, ວິທີການ ປະສານສົມທົບແໜ້ນກັບຂະແໜງການເງິນ ແລະ ພາກສ່ວນທີ່ພົວພັນເຖິງໜ້າທີ່ວຽກງານຂອງຕົນ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ພ້ອມທັງ ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດ ແລະ ພັດທະນາຂົງເຂດວຽກງານຂອງກົມໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິຜົນ;
3. ເຮັດວຽກມີການຕິດຕາມ, ກວດກາ, ຊຸກຍູ້, ສະຫຼຸບ, ຖອດຖອນບົດຮຽນ, ປະເມີນຜົນ, ຕີລາຄາຜົນໄດ້-ຜົນເສຍ ໃນການຈັດຕັ້ງປະຕິບັດວຽກງານຂອງຕົນ ບົນພື້ນຖານການປະຕິບັດລະບອບປະຊຸມ ສ່ອງແສງລາຍງານຢ່າງເປັນປົກກະຕິ;
4. ປະຕິບັດລະບອບປະຊຸມ ປະຈຳ ເດືອນ, 03 ເດືອນ, 06 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິບັດລະບອບລາຍງານ ໃຫ້ລັດຖະມົນຕີ ຢ່າງເປັນປົກກະຕິ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 16 ງົບປະມານ ແລະ ຕາປະທັບ**

ກົມແຜນການ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 17 ການຈັດຕັ້ງປະຕິບັດ**

ກົມແຜນການ, ສູນສະຖິຕິແຫ່ງຊາດ, ກົມຈັດຕັ້ງ, ບັນດາກົມ ແລະ ທຽບເທົ່າກົມ, ສະຖາບັນ, ຫ້ອງການຄະນະກຳມະການຮ່ວມມື (ລາວ-ຫວຽດນາມ ແລະ ລາວ-ຈີນ), ລັດວິສາຫະກິດທີ່ຂຶ້ນກັບກະຊວງການເງິນ; ພະແນກການເງິນແຂວງ, ນະຄອນຫຼວງ; ຫ້ອງການການເງິນເມືອງ, ນະຄອນ; ຂະແໜງສາຍຕັ້ງ (ພາສີ, ສ່ວຍສາອາກອນ, ຄັງເງິນ) ຢູ່ຂັ້ນທ້ອງຖິ່ນ, ທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ນຳໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມແຜນການ ສະບັບເລກທີ 1066/ກຜທ, ລົງວັນທີ 08 ກໍລະກົດ 2021 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງການເງິນ
ລັດຖະມົນຕີ

**ສັນຕິພາບ ພົມວິຫານ**